ແຜນງານບິດວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

## Basic Education Quality and Access in Lao PDR






# Role Model 4 – Creating Teaching Materials from Local Resources
# Media Report
## (28 April – 22 May 2023)

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ, ຕາງໜ້າໃຫ້ລັດຖະບານອົດສະຕຣາລີ
Basic Education Quality and Access in Lao PDR is managed by Tetra Tech International Development, on behalf of the Australian Government.

# Role Model 4 – Creating Teaching Materials from Local Resources
# Summary table of all releases

## News during filming

| Date | Media Type | Media Name | Details |
|---|---|---|---|
| 2022-11-24 | Newspaper | Education, Science and Sport Daily News | Front and Page 2 |
| 2022-11-23 | Social Media | Edu-Sport TV online Facebook | 64K Followers |
| 2022-11-24 | Social Media | Edu-Sport TV online Facebook | 64K Followers |
| 2022-11-24 | Social Media | Edu-Sport TV online Facebook | 64K Followers |
| 2022-12-06 | Social Media | Edu-Sport TV online Facebook | 64K Followers |
| 2022-12-06 | Social Media | Edu-Sport TV online Youtube channel | 466 Subscribers |
| 2023-12-13 | Social Media | Edu-Sport TV online Facebook | 64K Followers |
| 2023-12-19 | Social Media | Edu-Sport TV online Facebook | 64K Followers |
| 2022-12-13 | TV | ESTV Lao Sat 8 | |
| 2022-12-19 | TV | ESTV Lao Sat 8 | |
| 2022-12-26 | TV | ESTV Lao Sat 8 | |
| 2022-12-16 | Radio | Education Radio<br>FM 103.7 MHZ | |

## News when releasing the Docuseries

| Date | Media Type | Media Name | Details |
|---|---|---|---|
| 2023-05-02 | Newspaper | Vientiane Mai | Page 8 |
| 2023-05-02 | Newspaper | Edu-Sport TV online | Front and Page 2 |
| 2023-05-03 | Newspaper | KPL Pathet Lao (Lao) | Page 4 |
| 2023-05-04 | Newspaper | Vientiane Mai | Page 2 |
| 2023-05-22 | Newspaper | Economic and Commerce | Page 3 |
| 2023-05-02 | Social Media | Edu-Sport TV online Facebook | 64K Followers |
| 2023-03-24 | Social Media | Teacher Development Video Youtube Channel | 15.8K Subscribers |
| 2023-04-28 | Social Media | Vientiane Mai Facebook | 43K Followers |
| 2023-04-28 | Social Media | KPL Pathet Lao Facebook | 365K Followers |
| 2023-04-28 | Social Media | Edu-Sport TV online Facebook | 64K Followers |
| 2023-05-02 | Social Media | Vientiane 9 TV Facebook | 544K Followers |
| 2023-05-04 | Social Media | Tetra Tech International Development Facebook | 34K Followers |
| 2023-05-04 | Social Media | Tetra Tech International Development LinkedIn | 55K Followers |

| | | | |
|---|---|---|---|
| 2023-04-28 | Website | BEQUAL Website | Read article here |
| 2023-04-28 | Website | KPL English Website | Read article here |
| 2023-05-19 | Website | Lao Economic Daily Website | Read article here |
| Since 2023-04-03 | TV | ESTV Lao Sat 8 | All role models are broadcasted on rotation basis |
| 2023-05-02 | TV | Vientiane 9 Channel | Watch the news in Lao here |
| 2023-04-29 | Radio | Public Security Radio<br>FM 101.5 | |
| 2023-04-29 | Radio | Amy Radio<br>FM 99.7 | |
| 2023-04-29 | Radio | Lao National Radio<br>FM 103.7 | |
| 2023-04-29 | Radio | Vientiane Radio<br>FM 105.5 | |
| 2023-05-04 | WhatsApp | MT-PT WhatsApp and FB groups | 19 groups with trainers<br>+/- 660 members |
| 2023-05-04 | WhatsApp | PESS-DESB | 18 Provincial groups<br>452 members |
| 2023-05-04 | WhatsApp | ETSP | 3 groups with ethnic teachers<br>98 members |
| 2023-05-04 | WhatsApp | Pre-Service Writing team | 8 TTCs and 2 universities<br>72 members |
| 2023-05-04 | WhatsApp | Target DESB | Teacher Dev Units in 30 target districts<br>64 members |
| 2023-05-04 | WhatsApp | Target TTC | Key coordinators from the 3 target TTCs<br>17 members |

# Media Clipping

## News during filming

| 2022-11-24 | Newspaper | Education, Science and Sport Daily News | Front and Page 2 |
|---|---|---|---|



ທີມງານຖ່າຍທຳຄູຕົວແບບ ສວສ ພົບປະຄະນະ ສກຂ ສະຫວັນນະເຂດ ລາຍງານແຜນເຄື່ອນໄຫວວຽກງານ

ທີມງານຖ່າຍທຳວີດີໂອຄູຕົວແບບຂອງສູນໂຄສະນາຂ່າວສານການສຶກສາ ແລະ ກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ), ກະຊວງສຶກສາທິການ ແລະ... ອ່ານຕໍ່ໜ້າ 2



ວັນພະຫັດ ວັນທີ 24 ພະຈິກ 2022

ສຶກສາ, ວິທະຍາສາດ ແລະ ກິລາ

ຂ່າວພາຍໃນ 2

ທີມງານຖ່າຍທຳ...

ຕໍ່ຈາກໜ້າ 1......

| 2022-11-23 | Edu-Sport TV online Facebook |
|---|---|



ໜັງສືພິມສຶກສາ-ກິລາລາຍວັນ
November 23 at 9:04 AM

ທີມງານຖ່າຍທຳ ຄູຕົວແບບ ສວສ ພົບປະຄະນະ ສກສ ສະຫວັນນະເຂດ ລາຍງານແຜນເຄື່ອນໄຫວຂອງທີມງານ

---------------------------------------------------------------------

ທີມງານຖ່າຍທຳວີດີໂອຄູຕົວແບບຂອງສູນໂຄສະນາສື່ສານການສຶກສາ ແລະ ກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ), ກະຊວງສຶກສາທິການ ແລະ ກິລາ ໄດ້ເຂົ້າພົບປະຄະນະພະແນກສຶກສາທິການ ແລະ ກິລາ ແຂວງ (ສກສ) ສະຫວັນນະເຂດ ເພື່ອລາຍງານແຜນການເຄື່ອນໄຫວຂອງທີມງານຖ່າຍທຳຄູຕົວແບບ ໃນການສ້າງສື່ການຮຽນການສອນຈາກວັດຖຸທີ່ຫາໄດ້ໃນທ້ອງຖິ່ນ ທີ່ເມືອງອາດສະພອນ... See more

| 2022-11-24 | Edu-Sport TV online Facebook |
|---|---|



ໜັງສືພິມສຶກສາ-ກິລາລາຍວັນ
November 24 at 10:00 AM

ສ່ວນໜ້າ 1 ໜັງສືພິມສຶກສາ, ວິທະຍາສາດ ແລະ ກິລາ ລາຍວັນ ສະບັບວັນທີ 24 ພະຈິກ 2022

-----------------------------------------------

ສະໜັບສະໜູນການລາຍງານຂ່າວໂດຍ:
#AI-Sport ຮັບອອກແບບ ແລະ ຜະລິດເສື້ອກິລາ ດ້ວຍເນື້ອແພຄຸນນະພາບນຳເຂົ້າຈາກປະເທດໄທ
- 020 7879 7726... See more

| 2022-11-24 | Edu-Sport TV online Facebook |
|---|---|

ໜັງສືພິມສຶກສາ-ກິລາລາຍວັນ
November 24 at 3:53 PM ·

ເລີ່ມຖ່າຍທຳຄູຕົວແບບ ສ້າງສື່ການຮຽນການສອນ ທີ່ແຂວງສະຫວັນນະເຂດ

----------------------------------------------------------------------

ທີມງານຖ່າຍທຳວີດີໂອຄູຕົວແບບຂອງສູນໂທລະພາບສື່ສານການສຶກສາ ແລະ ກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ), ກະຊວງສຶກສາທິການ ແລະ ກິລາ ໄດ້ເລີ່ມລົງເຄື່ອນໄຫວຖ່າຍທຳຄູຕົວແບບ ໃນການສ້າງສື່ການຮຽນການສອນຈາກວັດຖຸທີ່ຫາໄດ້ໃນທ້ອງຖິ່ນ ທີ່ເມືອງອາດສະພອນ ແຂວງສະຫວັນນະເຂດ ເພື່ອສົ່ງເສີມວຽກງານການປະຕິບັດຫຼັກສູດສະບັບປັບປຸງໃໝ່ ຊຶ່ງປະຖົມສຶກສາຂອງແຜນງານການປັບ... See more



| 2022-12-06 | Edu-Sport TV online Facebook and Youtube |
|---|---|

Edu-Sport TV online
1d ·

ທີມງານຖ່າຍທຳວີດີໂອຄູຕົວແບບ ສວສ ສຳເລັດການລົງຖ່າຍທຳຄູຕົວແບບໃນການສ້າງສື່ການຮຽນການສອນ ທີ່ແຂວງສະຫວັນນະເຂດ
https://youtu.be/F_81Oo0EZac
::
ທ່ານສາມາດຕິດຕາມຊົມຜ່ານຊ່ອງທາງ YouTube: LaoESTV Official
https://www.youtube.com/channel/UCYAJaAuMDfkUtOh59bYR76Q...
See more



| 2022-12-13 | Edu-Sport TV online Facebook and TV |
|---|---|




ສກຂ ສະຫວັນນະເຂດ ສົ່ງເສີມນັກຮຽນທີ່ຈົບ ມ.ຕົ້ນ ເຂົ້າຮຽນສາຍວິຊາຊີບໆ ...

| 2022-12-16 | Edu-Sport TV online Facebook and TV |
|---|---|




#ຂ່າວສຶກສາ #ຂະແໜງການສຶກສາແລະກິລາ #ໂທລະພາບສຶກສາ

ເມືອງອາດສະພອນ ມີຜົນສໍາເລັດການເສີມສ້າງຄຸນນະພາບດ້ານການສຶກສາ

LaoESTV Official
348 subscribers
Subscribe 0 Share ...

## News when releasing the Docuseries

| | | | |
|---|---|---|---|
| 2023-05-02 | Newspaper | Vientiane Mai | Page 8 |



ປະດິດສື່ ການຮຽນ-ການສອນ ຈາກຊັບພະຍາກອນທີ່ຫາໄດ້ຈາກທ້ອງຖິ່ນ

https://www.youtube.com/watch?v=MgAGIHNxEOA&t=10swatch?v=MgAGIHNxEOA&t=10s

| | | | |
|---|---|---|---|
| 2023-05-02 | Newspaper | Edu-Sport TV online Facebook | Front and page 2 |



ສຶກສາ, ວິທະຍາສາດ ແລະ ກິລາ

Education, Science and Sports Daily News

ວັນອັງຄານ 2 ພຶດສະພາ 2023

"ANOTHAI OPEN TENNIS TOURNAMENT 2023"

RICOH

Call (021 219888, 218060)

| 2023-05-03 | Newspaper | KPL Pathet Lao (Lao) | Page 4 |
|---|---|---|---|

# ສົ່ງເສີມການປະດິດສື່ການຮຽນ-ການສອນ ຈາກວັດສະດຸ ທີ່ຫາໄດ້ໃນທ້ອງຖິ່ນ





https://www.youtube.com/watch?v=MgAGIHNxEOA&t=10s

| 2023-05-03 | Newspaper | KPL Pathet Lao (Lao) | Page 4 |
|---|---|---|---|



# ຄູ ອາດສະໜາ ແສງສຸລິສຸກ ເປັນແບບຢ່າງໃນການປະດິດ ສື່ການຮຽນ-ການສອນຈາກວັດສະດຸທີ່ຫາໄດ້ໃນທ້ອງຖິ່ນ



https://www.youtube.com/watch?v=MgAGIHNxEOA&t=10s

ເສດຖະກິດ ໝູ່ 22.05.2023 ສຶກສາ / ຄໍາຄົມ-ພາສາລາວ B3

# ວິທີການນໍາໃຊ້ສິ່ງປະດິດເຂົ້າໃນການສອນຂອງຄູວາດສະໜາ



ຄູ ວາດສະໜາ ແສນສຸລິສັກ ເປັນຄູຕົວແບບຜູ້ທີ່ມີຫົວຄິດປະດິດສ້າງໃນການສ້າງສື່ການສອນຈາກວັດສະດຸທີ່ຫາມາໄດ້ໃນທ້ອງຖິ່ນ ສາມາດຊ່ວຍໃຫ້ນັກຮຽນມີຄວາມສົນໃຈ ແລະ ເຂົ້າໃຈບົດຮຽນຫຼາຍຂຶ້ນ. ປັດຈຸບັນ ຄູວາດສະໜາສອນຢູ່ໂຮງຮຽນປະຖົມສຶກສາ ບ້ານໜອງເດີ່ນ ເມືອງອາດສະພອນ ແຂວງສະຫວັນນະເຂດ.

ນາງ ວາດສະໜາ ແສນສຸລິສັກ ຄູສອນຊັ້ນປະຖົມສຶກສາ ໃຫ້ສໍາພາດວ່າ: ບ້ານຂອງພວກເຮົາ ເປັນບ້ານຊົນເຜົ່າຜູ້ໄທທີ່ຢູ່ເຂດຫ່າງໄກສອກຫຼີກ ການສຶກສາໃນບ້ານເກີດມີຄວາມສໍາຄັນຫຼາຍເພື່ອໃຫ້ພູ່ບ້ານມີການພັດທະນາ ແລະ ເດັກນ້ອຍທຸກຄົນໄດ້ເຂົ້າໂຮງຮຽນ ແຕ່ກໍຍັງຂາດແຄນຄູສອນ ແລະ ອຸປະກອນການຮຽນຕ່າງໆ. ດັ່ງນັ້ນ ຂ້າພະເຈົ້າຈຶ່ງມີຄວາມໄຝ່ຝັນຢາກເປັນຄູເພື່ອກັບມາພັດທະນາບ້ານເກີດຂອງຕົນ ຂ້າພະເຈົ້າເປັນຜູ້ໜຶ່ງທີ່ມີໂອກາດໄດ້ຮັບທຶນການສຶກສາຂອງຄູຊົນເຜົ່າຈາກລັດຖະບານອົດສະຕາລີ ໂດຍຜ່ານແຜນງານບີຄວາໄປສຶກສາທີ່ມະຫາວິທະຍາໄລຄູສະຫວັນນະເຂດ ປັດຈຸບັນຂ້າພະເຈົ້າເປັນຄູສອນຊັ້ນປະຖົມສຶກສາປີທີ 2 ຮູ້ສຶກຄວາມພາກພູມໃຈຫຼາຍທີ່ເຮັດໃຫ້ຄວາມຝັນຂອງຕົນເອງເປັນຈິງຄື ໄດ້ກັບມາສອນໃນຖິ່ນຖານບ້ານເກີດຂອງຕົນເອງ ປະກອບສ່ວນໃນການສຶກສາພັດທະນາໂຮງຮຽນເມືອງອາດສະພອນ ແຂວງສະຫວັນນະເຂດ.

ສິ່ງທີ່ເປັນແຮງບັນດານໃຈໃຫ້ຄູວາດສະໜາຢາກເປັນຄູ ຍ້ອນວ່າ ຕົນເອງຖິ່ນຖານບ້ານເກີດຢູ່ເຂດຫ່າງໄກສອກຫຼີກ ເຊິ່ງເປັນເຂດທີ່ບໍ່ທັນພັດທະນາ ໃນໂຮງຮຽນກໍຂາດເຂີນຄູສອນ ເມື່ອສິດສອນແລ້ວກໍເກີດມີຄວາມມັກຮັກອາຊີບຄູ ແລະ ມັກເດັກນ້ອຍຫຼາຍຂຶ້ນ ຍາມໃດກໍຕາມມັກຊອກຫາວິທີເຕັກນິກການສອນໃໝ່ໆເພື່ອຈະໄດ້ຖ່າຍທອດຄວາມຮູ້ໃຫ້ນັກຮຽນໄດ້ຫຼາຍທີ່ສຸດສົມກັບຈັນຍາບັນຄູວ່າ "ຮັກອາຊີບ ແພງນັກຮຽນ ຊື່ສັດບໍລິສຸດ ເປັນແບບຢ່າງນໍາໜ້າ ແລະ ພັດທະນາຕົນເອງຢ່າງບໍ່ຢຸດຢັ້ງ". ນອກຈາກປຶ້ມແບບຮຽນ ແລະ ປຶ້ມອ່ານເສີມແລ້ວ ຄູວາດສະໜາຍັງໄດ້ຜະລິດສື່ການຮຽນການສອນເຊັ່ນ: ບັດຄໍາສັບ, ຮູບບັດຄໍາ, ໄມ້ຕື້ວ, ສານກະຕໍ່ດ້ວຍໃບໝາກພ້າວ, ຜະລິດນໍ້າສີຈາກໃບໄມ້, ສື່ດັ່ງກ່າວກໍໄດ້ນໍາໃຊ້ຫຼາຍໃນວິຊາພາສາລາວ, ພາລະສຶກສາ, ສິລະປະກໍາ ແລະ ຫັດຖະກໍາ, ຄະນິດສາດ ແລະ ອື່ນໆ.

ຄູວາດສະໜາເວົ້າອີກວ່າ ການນໍາໃຊ້ອຸປະກອນໃນການຮຽນການສອນຈະຊ່ວຍໃຫ້ເດັກນ້ອຍເຂົ້າໃຈຫຼາຍຂຶ້ນ ນັກຮຽນສາມາດເຮັດກິດຈະກໍາໃນຫ້ອງຮຽນໄດ້ ແລະ ເຂົ້າໃຈຫຼາຍຂຶ້ນ ເຊິ່ງສັງເກດໄດ້ວ່ານັກຮຽນມີສ່ວນຮ່ວມ ແລະ ມີແຮງຈູງໃຈໃນການຮຽນຄືຢ່າງ: ນັກຮຽນມີບັນຫາກ່ຽວກັບການບວກເລກ ຂ້າພະເຈົ້າໄດ້ຊອກຫາໄມ້ຕື້ວມາໃຫ້ເຂົາເຈົ້າໄດ້ບວກເລກດ້ວຍຕົນເອງໂດຍການສໍາຜັດໄມ້, ມີນັກຮຽນຈໍານວນໜຶ່ງທີ່ບໍ່ສາມາດຂຽນເລກແຕ່ 1-100 ໄດ້ ຂ້າພະເຈົ້າໄດ້ສ້າງເກມການໂຍນໝາກຫາກະລັອກໃຫ້ນັກຮຽນຫຼິ້ນເພື່ອໃຫ້ນັກຮຽນໄດ້ຮັບຈໍານວນແຕ່ 1-100 ວິທີນີ້ຈະເຮັດໃຫ້ນັກຮຽນສາມາດຈື່ຈໍານວນນັ້ນໄດ້ ນອກຈາກນັ້ນ ຂ້າພະເຈົ້າຍັງໄດ້ປະດິດໂມງຈາກເສດແກັດເພື່ອມາສອນໂມງເວລາໃຫ້ນັກຮຽນຮູ້ຈັກເວລາໃນການມາໂຮງຮຽນ.





ອາຈານ ການ ແສງສຸລິຍາ ຜູ້ອໍານວຍການໂຮງຮຽນປະຖົມສຶກສາ ບ້ານໜອງເດີ່ນ ໃຫ້ສໍາພາດຕໍ່ການສອນຂອງຄູວາດສະໜາວ່າ: ຄູວາດສະໜາ ເປັນຄູທີ່ມີຄວາມໂດດເດັ່ນດ້ານຫົວຄິດປະດິດສ້າງ ໂດຍການນໍາເອົາວັດສະດຸທີ່ຫາມາໄດ້ຈາກທໍາມະຊາດ ເປັນຕົ້ນວ່າ ການນໍາໃຊ້ແກ່ນໝາກໄມ້, ກະແຕ, ໃບພ້າວ...ມາຮັບໃຊ້ໃນສື່ການຮຽນການສອນ ແລະ ເຫັນວ່ານັກຮຽນໃຫ້ການຮ່ວມມື, ເຂົ້າໃຈດີ, ມີຄວາມມ່ວນຊື່ນກັບການຮຽນຫຼາຍຂຶ້ນ ແລະ ຫ້າວຫັນຕໍ່ການພັດທະນາຄວາມຮູ້ຂອງຕົນເອງ ຂ້າພະເຈົ້າຄິດວ່າ ຄູວາດສະໜາ ເປັນຄູແບບຢ່າງທີ່ນໍາໃຊ້ອຸປະກອນໃນທ້ອງຖິ່ນໃຫ້ມີປະໂຫຍດ ຂໍຮຽນຮ້ອງເຊີນຊວນຄູຜູ້ທີ່ສົນໃຈນໍາວິທີນີ້ໄປນໍາໃຊ້ໃນການຮຽນການສອນໄດ້.

ນັບແຕ່ປີ 2019 ເປັນຕົ້ນມາ ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ ເປັນຫຼັກສູດການຮຽນການສອນທີ່ເນັ້ນເອົານັກຮຽນເປັນຈຸດໃຈກາງ ປັດຈຸບັນນັກຮຽນໄດ້ຮຽນຮູ້ຜ່ານກິດຈະກໍາດ້ວຍປະສົບການ, ການປະຕິບັດຕົວຈິງ ມີການນໍາໃຊ້ອຸປະກອນການຮຽນ ແລະ ນໍາໃຊ້ຄວາມຮູ້ເພື່ອຊ່ວຍໃຫ້ນັກຮຽນມີສ່ວນຮ່ວມ ແລະ ຮຽນຮູ້ດ້ວຍການປະຕິບັດຕົວຈິງ ຄູສາມາດສ້າງອຸປະກອນການຮຽນການສອນດ້ວຍຊັບພະຍາກອນທີ່ມີໃນຕົວຈິງເພື່ອຊ່ວຍໃຫ້ນັກຮຽນເຂົ້າໃຈບົດຮຽນໄດ້ດີຂຶ້ນ.

[ຂໍ້ມູນຈາກ: ກະຊວງສຶກສາທິການ ແລະ ກິລາ]

| 2023-05-02 | Edu-Sport TV online Facebook |
|---|---|



ສຶກສາ, ວິທະຍາສາດ ແລະ ກິລາ

Education, Science and Sports Daily News

ວັນອັງຄານ 2 ພຶດສະພາ 2023

ປີທີ 23, ສະບັບທີ 4.889

ແຮມ 13 ຄ່ຳ ເດືອນ 6

ພສ 2566

ເນື້ອໃນ 3 ຂໍ້ແຊ່ງເດັ່ນ

ຊົມເຊີຍວັນກຳມະກອນສາກົນ ຄົບຮອບ 137 ປີ (1 ພຶດສະພາ 1886-1 ພຶດສະພາ 2023) ຢ່າງສຸດໃຈ

ຍ່າງເພື່ອສຸຂະພາບ ສະຫຼອງວັນກຳມະກອນສາກົນ ຄົບຮອບ 137 ປີ ຢ່າງຟົດຟື້ນ

ວລ ເຕັກນິກວິຊາຊີບ ຫຼວງພະບາງ-ມະຫາວິທະຍາໄລ ກຸນຈາງ ສ.ເກົາຫຼີ ຮ່ວມມືດ້ານວິຊາການ

ສາລະຄະດີຄູຕົວແບບ ທີ່ປະດິດສື່ການຮຽນການສອນຈາກວັດສະດຸທີ່ຫາໄດ້ໃນທ້ອງຖິ່ນ ໄດ້ເຜີຍແຜ່ຜ່ານສື່ຕ່າງໆແລ້ວ

"ຂັນທະນຸວົງ" ຄວ້າແຊ້ມ 2 ລາຍການ ເທັນນິດ ອາໂນໄທ ໂອເພັນ 2023

"ANOTHAI OPEN TENNIS TOURNAMENT 2023"


ປຣິນຄີ, ກ໊ອບປີ້ຄີ ຕ້ອງ..... RICOH

Ricoh MP C4503P Color Laser Multifunction Printer

Call (021 219888, 218060)


| 2023-03-24 | Teacher Development Video Youtube Channel |
|---|---|




ສາລະຄະດີຄູຕົວແບບ 4: ການປະດິດສື່ການສອນ ຈາກວັດສະດຸໃນທ້ອງຖິ່ນ

## 2023-04-28 | Vientiane Mai Facebook

Vientiane Mai
16m ·

ນຳສະເໜີການປະດິດສື່ການຮຽນ-ການສອນຈາກຊັບພະຍາກອນທີ່ຫາໄດ້ຈາກທ້ອງຖິ່ນ

.............................................................................

ການປະດິດສື່ ການຮຽນ-ການສອນ ຈາກຊັບພະຍາກອນທີ່ຫາໄດ້ຈາກທ້ອງຖິ່ນ ແມ່ນເປັນຫົວຂໍ້ຂອງຕອນໃໝ່ຂອງສາລະຄະດີຄູຕົວແບບ ທີ່ໄດ້ອອກອາກາດທາງຊ່ອງໂທລະພາບສຶກສາ ວິທະຍຸສຶກສາ ແລະ ຜ່ານທາງຊ່ອງທາງຢູທູບ ສຳລັບຕອນທີ່ 4 ຂອງສາລະຄະດີຄູຕົວແບບ ແມ່ນໄດ້ອອກອາກາດ ແລະ ເຜີຍແຜ່ຜ່ານທາງໂທລະພາບ ວິທະຍຸ ແລະ ໜັງສືພິມຂອງກະຊວງສຶກສາທິການ ແລະ ກີລາ ໂດຍ ສູນໂຄສະນາຂ່າວສານການສຶກສາ ແລະ ກີລາ (ສຄຂ) ເຊິ່ງສະລະຄະດີດັ່ງກ່າວໄດ້ບອກເລົ່າເລື່ອງທີ່ເປັນແຮງບັນດານໃຈຂອງຄູສອນຄົນໜຶ່ງໃນໂຮງຮຽນຂອງລັດແຫ່ງໜຶ່ງ ເຊິ່ງເປັນຜູ້ທີ່ດີເດັ່ນໃນການສ້າງສື່ການຮຽນ-ການສອນໂດຍນຳໃຊ້ສິ່ງຂອງທີ່ບໍ່ໄດ້ຊື້ ຫຼື ສິ່ງຂອງທີ່ສາມາດນຳກັບມາໃຊ້ຄືນໃໝ່ໄດ້.

ຄູ ວາດສະໜາ ແສງສຸລິສຸກ ແມ່ນເປັນຄົນຊົນເຜົ່າຜູ້ໄທ ລາວໄດ້ຮັບທຶນການສຶກສາຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ (ແຜນງານບີຄວາ) ໃນປີ 2015 ເພື່ອສຶກສາທີ່ວິທະຍາໄລຄູສະຫວັນນະເຂດ ປັດຈຸບັນ ລາວໄດ້ເປັນຄູສອນຫ້ອງ ປ1 ໃນໝູ່ບ້ານທີ່ຢູ່ເຂດຫ່າງໄກ ໃນເມືອງອາດສະພອນ ແຂວງສະຫວັນນະເຂດ ທີມງານ ສຄຂ ໄດ້ຄັດເລືອກເອົາລາວເປັນຄູຕົວແບບ ເພື່ອບອກເລົ່າປະສົບການທີ່ໜ້າປະທັບໃຈຂອງລາວ ທີ່ໄດ້ນຳໃຊ້ຄວາມຄິດສ້າງສັນທີ່ໂດດເດັ່ນ ໃນການຊ່ວຍນັກຮຽນຂອງລາວໄດ້ຮຽນຮູ້ ແລະ ມີສ່ວນຮ່ວມ ໃນກະປະຕິບັດການຮຽນການສອນດ້ວຍການປະຕິບັດກິດຈະກຳຕົວຈິງ ໂດຍນຳໃຊ້ວັດສະດຸທີ່ຫາໄດ້ໃນທ້ອງຖິ່ນ.

ເລື່ອງລາວຂອງຄູວາດສະໜາແມ່ນສາມາດຮັບຊົມໄດ້ຜ່ານທາງຊ່ອງຢູທູບ ວີດີໂອສຳລັບການພັດທະ ນາຄູ Teacher Development Videos ແລະ ທາງໂທລະພາບສຶກສາ ທາງດາວທຽມລາວແຊັດ (Lao Sat) ຊ່ອງ 8 ຈຸດປະສົງຂອງສາລະຄະດີ ແມ່ນເພື່ອສື່ສານຜ່ານການສຳພາດບຸກຄົນທີ່ດີເດັ່ນ ເພື່ອສົ່ງເສີມ ແລະ ຊຸກຍູ້ໃນປະຕິບັດຕາມແບບວິທີທີ່ດີທີ່ສຸດໃນການສອນດ້ວຍຫຼັກສູດສະບັບປັບປຸງໃໝ່ ແລະ ເພື່ອແບ່ງປັນແນວຄວາມຄິດທີ່ທັນສະໄໝທີ່ນຳສະເໜີການສອນ ແລະ ສິ່ງທ້າຍທາຍໃນການສອນ.

ທ່ານສາມາເບິ່ງວິດີໂອໄດ້ທີ່: https://www.youtube.com/watch?v=MgAGiHNxEOA&t=10s
#VientianeMai



## 2023-04-28 | KPL Pathet Lao Facebook

ປະເທດລາວ Pathedlao
3d ·

ສົ່ງເສີມການປະດິດສື່ການຮຽນ-ການສອນ
ຈາກວັດສະດຸທີ່ຫາໄດ້ໃນທ້ອງຖິ່ນ

ຂປລ. ການປະດິດສື່ການຮຽນ-ການສອນ ຈາກຊັບພະຍາກອນທີ່ຫາໄດ້ຈາກທ້ອງຖິ່ນ ເປັນຫົວຂໍ້ຂອງຕອນໃໝ່ຂອງສາລະຄະດີຄູຕົວແບບ ທີ່ໄດ້ອອກອາກາດທາງຊ່ອງໂທລະພາບສຶກສາ, ວິທະຍຸສຶກສາ ແລະ ຜ່ານທາງຊ່ອງທາງຢູທູບ, ສະລະຄະດີດັ່ງກ່າວ ໄດ້ບອກເລົ່າເລື່ອງທີ່ເປັນແຮງບັນດານໃຈຂອງຄູສອນຄົນໜຶ່ງໃນໂຮງຮຽນຂອງລັດແຫ່ງໜຶ່ງ ເຊິ່ງເປັນຜູ້ທີ່ດີເດັ່ນໃນການສ້າງສື່ການຮຽນ-ການສອນ ໂດຍນຳໃຊ້ສິ່ງຂອງທີ່ບໍ່ໄດ້ຊື້ ຫລື ສິ່ງຂອງທີ່ສາມາດນຳກັບມາໃຊ້ຄືນໃໝ່ໄດ້.
ຄູ ວາດສະໜາ ແສງສຸລິສຸກ ເປັນຄູສອນຫ້ອງ ປ1 ໃນໝູ່ບ້ານທີ່ຢູ່ເຂດຫ່າງໄກ ໃນເມືອງອາດສະພອນ, ແຂວງສະຫວັນນະເຂດ ໄດ້ຄັດເລືອກເປັນຄູຕົວແບບ ເພື່ອບອກເລົ່າປະສົບການທີ່ໜ້າປະທັບໃຈຂອງລາວ ທີ່ໄດ້ນຳໃຊ້ຄວາມຄິດສ້າງສັນທີ່ໂດດເດັ່ນ ໃນການຊ່ວຍນັກຮຽນ ໄດ້ຮຽນຮູ້ ແລະ ມີສ່ວນຮ່ວມ ໃນກະປະຕິບັດການຮຽນ-ການສອນ ດ້ວຍການປະຕິບັດກິດຈະກຳຕົວຈິງ ໂດຍນຳໃຊ້ວັດສະດຸທີ່ຫາໄດ້ໃນທ້ອງຖິ່ນ.
ນັບແຕ່ປີ 2019 ເປັນຕົ້ນມາ, ກະຊວງສຶກສາທິການ ແລະ ກີລາ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໄດ້ມີການພັດທະນາ ແລະ ປະກາດນຳໃຊ້ຫລັກສູດຂັ້ນປະຖົມສະບັບປັບປຸງໃໝ່ ຂອງແຕ່ລະຂັ້ນຮຽນໃນແຕ່ລະປີ ໂດຍຖືເອົານັກຮຽນເປັນໃຈກາງ. ປັດຈຸບັນ, ນັກຮຽນໄດ້ມີການຮຽນຮູ້ໂດຍຜ່ານກິດຈະກຳ, ຈາກປະສົບການຕົວຈິງ, ລົງມືປະຕິບັດດ້ວຍຕົນເອງ ແລະ ມີສ່ວນຮ່ວມໃນການນຳໃຊ້ສື່ການຮຽນ-ການສອນ ແລະ ໄດ້ນຳໃຊ້ຄວາມຮູ້ຂອງພວກເຂົາ, ເຊິ່ງສາລະຄະດີຄູຕົວແບບ ມີຈຸດປະສົງ ເພື່ອສື່ສານຜ່ານການສຳພາດບຸກຄົນທີ່ດີເດັ່ນ ເພື່ອສົ່ງເສີມ ແລະ ຊຸກຍູ້ໃນປະຕິບັດຕາມແບບວິທີທີ່ດີທີ່ສຸດ ໃນການສອນດ້ວຍຫລັກສູດສະບັບປັບປຸງໃໝ່ ແລະ ເພື່ອແບ່ງປັນແນວຄວາມຄິດທັນສະໄໝທີ່ນຳສະເໜີການສອນ ແລະ ສິ່ງທ້າຍທາຍໃນການສອນ.
ຄູວາດສະໜາ ໄດ້ກ່າວວ່າ: ຂ້າພະເຈົ້າມັກຫລັກສູດໃໝ່ຫລາຍ ແລະ ນັກຮຽນກໍມີຄວາມມ່ວນກວ່າເກົ່າ ແລະ ມີແຮງຈູງໃຈຫລາຍຂຶ້ນ. ຫ້ອງຮຽນຂອງຂ້າພະເຈົ້າໄດ້ມີຫລາກຫລາຍກິດຈະກຳ ໂດຍໄດ້ສ້າງສື່ການຮຽນ-ການສອນຫລາຍໆຢ່າງ ເພື່ອໃຫ້ນັກຮຽນໄດ້ນຳໃຊ້ໃນຫ້ອງຮຽນ ແລະ ເຫັນໄດ້ວ່າ ມັນຊ່ວຍໃຫ້ນັກຮຽນສາມາດຈື່ຈຳບົດ ຮຽນໄດ້ດີກວ່າເກົ່າ ເມື່ອພວກເຂົາປະຕິບັດກິດຈະກຳ ແລະ ນຳໃຊ້ສື່ເຫລົ່ານັ້ນເຂົ້າຊ່ວຍການຮຽນ ເປັນຕົ້ນ ໄດ້ປະດິດສື່ການສອນ ຈາກໃບພ້າວມາສານເປັນໝາກບານ, ການສ້າງນ້ຳສີຈາກດອກໄມ້ ແລະ ຮາກໄມ້ ເພື່ອໃຊ້ໃນວິຊາແຕ້ມຮູບ. ນອກຈາກນີ້, ໄດ້ນຳໃຊ້ໄມ້ໄຜ່ມາເຫລົາເປັນໄມ້ຄື້ອ ຫລື ນຳໃຊ້ ແກ່ນໝາກຂາມ ເພື່ອເອົາມາຊ່ວຍນັບເລກ. ສຳລັບການເລົ່າເລື່ອງ, ນັກຮຽນກໍໄດ້ຊ່ວຍໃນການກະກຽມອຸປະກອນ ເຊັ່ນວ່າ: ການແຕ້ມຮູບ ແລະ ລະບາຍສີບັດຮູບພາບ.
ຄູ ວາດສະໜາ ໄດ້ກ່າວຕື່ມວ່າ: ເມື່ອເຮົານຳໃຊ້ວັດສະດຸທີ່ຫາໄດ້ຈາກຊຸມຊົນ, ນັກຮຽນຈະສາມາດເຊື່ອມໂຍງເຂົ້າໄປຫາບົດຮຽນ ແລະ ພວກເຂົາຈະເຂົ້າໃຈຫລາຍຂຶ້ນ ແລະ ຫວັງວ່າສິ່ງປະດິດຕ່າງໆເຫລົ່ານີ້ ຈະສາມາດແບ່ງເປັນຄວາມຄິດສ້າງສັນ ແລະ ແຮງບັນດານໃຈໃຫ້ແກ່ຄູທ່ານອື່ນໆ.
ເລື່ອງລາວຂອງຄູວາດສະໜາແມ່ນສາມາດຮັບຊົມໄດ້ຜ່ານທາງຊ່ອງຢູທູບ ວິດີໂອ ສຳລັບການພັດທະນາຄູ Teacher Development Videos ແລະ ທາງໂທລະພາບສຶກສາ ທາງດາວທຽມລາວແຊັດ (Lao Sat) ຊ່ອງ 8. ທ່ານສາມາເບິ່ງວິດີໂອໄດ້ທີ່ນີ້:

https://www.youtube.com/watch?v=MgAGiHNxEOA&t=10s





| 2023-04-28 | Edu-Sport TV online Facebook and TV |
|---|---|






| 2023-05-02 | Vientiane 9 TV Facebook and TV |
|---|---|



| 2023-05-04 | Tetra Tech International Development Facebook and LinkedIn |
|---|---|

**Tetra Tech International Development Services**
May 4 at 6:33 AM ·

Did you know you could paint with flowers and roots? Learn counting with bamboo sticks and seeds? Make balls with palm leaves?

Ajan Vatsana Sengsoulisouk is an inspiring teacher from Atsideaaphone district, Savannakhet Province in Laos who uses creativity to help her students to learn through using hands-on activities using locally available resources.

Listen to her being interviewed in the new episode of the Role Model docuseries, produced by the Ministry of Education and Sports with the support of Australia.



YOUTUBE.COM

**ສາລະຄະດີຄູຕົວແບບ 4: ການປະດິດສື່ການສອນ ຈາກວັດສະດຸໃນທ້ອງຖິ່ນ**

ທ່ານສາມາດດາວໂຫລດວິດີໂອນີ້ໄດ້ທີ່:https://www.dropbox.com/s/epj0gig8zizs628/Role...

| 2023-05-19 | Lao Economic Daily Website |
|---|---|




ຄູ ວາດສະໜາ ແສນສຸລິສັກ ເປັນຄູຕົວແບບຜູ້ທີ່ມີຫົວຄິດປະດິດສ້າງໃນການສ້າງສື່ການສອນຈາກວັດສະດຸທີ່ຫາມາໄດ້ໃນທ້ອງຖິ່ນ ສາມາດຊ່ວຍໃຫ້ນັກຮຽນມີຄວາມສົນໃຈ ແລະ ເຂົ້າໃຈບົດຮຽນຫຼາຍຂຶ້ນ. ປັດຈຸບັນ ຄູວາດສະໜາສອນຢູ່ໂຮງຮຽນປະຖົມສຶກສາ ບ້ານໜອງເດີ່ນ ເມືອງອາດສະພອນ ແຂວງ ສະຫວັນນະເຂດ.

ນາງ ວາດສະໜາ ແສນສຸລິສັກ ຄູສອນຊັ້ນປະຖົມສຶກສາ ໃຫ້ສຳພາດວ່າ: ບ້ານຂອງພວກເຮົາ ເປັນບ້ານຊົນເຜົ່າຜູ້ໄທທີ່ຢູ່ເຂດຫ່າງໄກສອກຫຼີກ ການສຶກສາໃນບ້ານເກີດມີຄວາມສຳຄັນຫຼາຍເພື່ອໃຫ້ໝູ່ບ້ານມີການພັດທະນາ ແລະ ເດັກນ້ອຍທຸກຄົນໄດ້ເຂົ້າໂຮງຮຽນ ແຕ່ກໍຍັງຂາດແຄນຄູສອນ ແລະ ອຸປະກອນການຮຽນຕ່າງໆ. ດັ່ງນັ້ນ ຂ້າພະເຈົ້າຈຶ່ງມີຄວາມໄຝ່ຝັນຢາກເປັນຄູເພື່ອກັບມາພັດທະນາບ້ານເກີດຂອງຕົນ ຂ້າພະເຈົ້າເປັນຜູ້ໜຶ່ງທີ່ມີໂອກາດໄດ້ຮັບທຶນການສຶກສາຂອງຄູຊົນເຜົ່າຈາກລັດຖະບານອົດສະຕາລີໂດຍຜ່ານແຜນງານບີຄວາໄປສຶກສາທີ່ມະຫາວິທະຍາໄລຄູສະຫວັນນະເຂດ ປັດຈຸບັນຂ້າພະເຈົ້າເປັນຄູສອນຊັ້ນປະຖົມສຶກສາປີທີ 2 ຮູ້ສຶກຄວາມພາກພູມໃຈຫຼາຍທີ່ເຮັດໃຫ້ຄວາມຝັນຂອງຕົນເອງເປັນຈິ່ງຄື ໄດ້ກັບມາສອນໃນຖິ່ນຖານບ້ານເກີດຂອງຕົນເອງ ປະກອບສ່ວນໃນການສຶກສາພັດທະນາໂຮງຮຽນເມືອງອາດສະພອນ ແຂວງສະຫວັນນະເຂດ.

ສິ່ງທີ່ເປັນແຮງບັນດານໃຈໃຫ້ຄູວາດສະໜາຢາກເປັນຄູຍ້ອນວ່າ ຕົນເອງຖິ່ນຖານບ້ານເກີດຢູ່ເຂດຫ່າງໄກສອກຫຼີກ ເຊິ່ງເປັນເຂດທີ່ບໍ່ທັນພັດທະນາ ໃນໂຮງຮຽນກໍຂາດເຂີນຄູສອນ ເມື່ອສິດສອນແລ້ວກໍເກີດມີຄວາມມັກຮັກອາຊີບຄູ ແລະ ມັກເດັກນ້ອຍຫຼາຍຂຶ້ນ ຍາມໃດກໍຕາມມັກຊອກຫາວິທີເຕັກນິກການສອນໃໝ່ໆເພື່ອຈະໄດ້ຖ່າຍທອດຄວາມຮູ້ໃຫ້ນັກຮຽນໄດ້ຫຼາຍທີ່ສຸດສົມກັບຈັນຍາບັນຄູວ່າ "ຮັກອາຊີບ ແພງນັກຮຽນ ຊື່ສັດບໍລິສຸດ ເປັນແບບຢ່າງນຳໜ້າ ແລະ ພັດທະນາຕົນເອງຢ່າງບໍ່ຢຸດຢັ້ງ". ນອກຈາກປຶ້ມແບບຮຽນ ແລະ ປຶ້ມອ່ານເສີມແລ້ວ ຄູວາດສະໜາຍັງໄດ້ຜະລິດສື່ການຮຽນການສອນເຊັ່ນ: ບັດຄຳສັບ, ຖົງບັດທຳ, ໄມ້ດິ້ວ, ສານກະຕໍ້ດ້ວຍໃບໝາກພ້າວ, ຜະລິດນໍ້າສີຈາກໃບໄມ້, ສື່ດັ່ງກ່າວກໍໄດ້ນຳໃຊ້ຫຼາຍໃນວິຊາພາສາລາວ, ພາລະສຶກສາ, ສິລະປະກຳ ແລະ ຫັດຖະກຳ, ຄະນິດສາດ ແລະ ອື່ນໆ.

ຄູວາດສະໜາເວົ້າອີກວ່າ ການນຳໃຊ້ອຸປະກອນໃນການຮຽນການສອນຈະຊ່ວຍໃຫ້ເດັກນ້ອຍເຂົ້າໃຈຫຼາຍຂຶ້ນ ນັກຮຽນສາມາດເຮັດກິດຈະກຳໃນຫ້ອງຮຽນໄດ້ ແລະ ເຂົ້າໃຈຫຼາຍຂຶ້ນ ເຊິ່ງສັງເກດໄດ້ວ່ານັກຮຽນມີສ່ວນຮ່ວມ ແລະ ມີແຮງຈູງໃຈໃນການຮຽນຕົວຢ່າງ: ນັກຮຽນມີບັນຫາກ່ຽວກັບການບວກເລກ ຂ້າພະເຈົ້າໄດ້ຊອກຫາໄມ້ດິ້ວມາໃຫ້ເຂົາເຈົ້າໄດ້ບວກເລກດ້ວຍຕົນເອງໂດຍການສຳຜັດໄມ້, ມີນັກຮຽນຈຳນວນໜຶ່ງທີ່ບໍ່ສາມາດຂຽນເລກແຕ່ 1-100 ໄດ້ ຂ້າພະເຈົ້າໄດ້ສ້າງເກມການໂຍນໝາກກະລ໊ອກໃຫ້ນັກຮຽນຫຼິ້ນເພື່ອໃຫ້ນັກຮຽນໄດ້ຮັບຈຳນວນແຕ່ 1-100 ວິທີນີ້ຈະເຮັດໃຫ້ນັກຮຽນສາມາດຈື່ຈຳນວນນັ້ນໄດ້ ນອກຈາກນັ້ນ ຂ້າພະເຈົ້າຍັງໄດ້ປະດິດໂມງຈາກເສດແກັດເພື່ອມາສອນໂມງເວລາໃຫ້ນັກຮຽນຮູ້ຈັກເວລາໃນການມາໂຮງຮຽນ.

ອາຈານ ການ ແສງສຸລິຍາ ຜູ້ອຳນວຍການໂຮງຮຽນປະຖົມສຶກສາ ບ້ານໜອງເດີ່ນ ໃຫ້ສຳພາດຕໍ່ການສອນຂອງຄູວາດສະໜາວ່າ: ຄູວາດສະໜາເປັນຄູທີ່ມີຄວາມໂດດເດັ່ນດ້ານຫົວຄິດປະດິດສ້າງ ໂດຍການນຳເອົາວັດສະດຸທີ່ຫາມາໄດ້ຈາກທຳມະຊາດ ເປັນຕົ້ນວ່າການນຳໃຊ້ແກ່ນໝາກໄມ້, ກະແຕ້, ໃບພ້າວ...ມາຮັບໃຊ້ໃນສື່ການຮຽນການສອນ ແລະ ເຫັນວ່ານັກຮຽນໃຫ້ການຮ່ວມມື, ເຂົ້າໃຈດີ, ມີຄວາມມ່ວນຊື່ນກັບການຮຽນຫຼາຍຂຶ້ນ ແລະ ທັນທັນຕໍ່ການພັດທະນາຄວາມຮູ້ຂອງຕົນເອງ ຂ້າພະເຈົ້າຄິດວ່າຄູວາດສະໜາ ເປັນຄູແບບຢ່າງທີ່ນຳໃຊ້ອຸປະກອນໃນທ້ອງຖິ່ນໃຫ້ມີປະໂຫຍດ ຂໍຮຽນຮ້ອງເຊີນຊວນຄູຜູ້ທີ່ສົນໃນນຳວິທີນີ້ໄປນຳໃຊ້ໃນການຮຽນການສອນໄດ້.

ນັບແຕ່ປີ 2019 ເປັນຕົ້ນມາ ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ ເປັນຫຼັກສູດການຮຽນການສອນທີ່ເນັ້ນເອົານັກຮຽນເປັນຈຸດໃຈກາງ ປັດຈຸບັນນັກຮຽນໄດ້ຮຽນຮູ້ຜ່ານກິດຈະກຳດ້ວຍປະສົບການ, ການປະຕິບັດຕົວຈິງ ມີການນຳໃຊ້ອຸປະກອນການຮຽນ ແລະ ນຳໃຊ້ ຄວາມຮູ້ເພື່ອຊ່ວຍໃຫ້ນັກຮຽນມີສ່ວນຮ່ວມ ແລະ ຮຽນຮູ້ດ້ວຍການປະຕິບັດຕົວຈິງ ຄູສາມາດສ້າງອຸປະກອນການຮຽນການສອນດ້ວຍຊັບພະຍາກອນທີ່ມີໃນຕົວຈິງເພື່ອຊ່ວຍໃຫ້ນັກຮຽນເຂົ້າໃຈບົດຮຽນໄດ້ດີຂຶ້ນ.